ASEAN AUSTRALIA SMART CITIES TRUST FUND
Asian Development Bank

Australian Government
Department of Foreign Affairs and Trade

ADB

RAMBØLL



# ການຄຸ້ມຄອງດ້ານການເງິນຂອງນະຄອນອັດສະລິຍະ

14 ກັນຍາ ແລະ 05 ຕຸລາ 2022

**ສະແກນລະຫັດ ເພື່ອລົງທະບຽນເຂົ້າຮ່ວມ ຫຼັກສູດ ການຄຸ້ມຄອງດ້ານການເງິນຂອງ ນະຄອນອັດສະລິຍະ ຫຼື ເຂົ້າເບິ່ງຂໍ້ມູນໄດ້ທີ່ BIT.LY/AASCTFAPPLY**

ກອງທຶນ AASCTF ເຫັນໄດ້ວ່າ ການພັດທະນາຄວາມອາດສາມາດເປັນໜຶ່ງໃນຜົນໄດ້ຮັບທີ່ມີຄວາມສຳຄັນ ຄຽງຄູ່ກັບການສະໜັບສະໜູນດ້ານວິຊາການໃຫ້ແກ່ລະບົບການວາງແຜນ, ການສະໜອງການບໍລິການ ແລະ ການຄຸ້ມຄອງການເງິນຂອງບັນດານະຄອນອາຊຽນ. ນັບຕັ້ງແຕ່ກອງທຶນດັ່ງກ່າວໄດ້ເລີ່ມຕົ້ນໃນປີ 2019, ໄດ້ມີກອງປະຊຸມແນະນຳກ່ຽວກັບກອງທຶນຢູ່ພູມີພາກອາຊຽນ ທີ່ບໍ່ພຽງແຕ່ສະແດງໃຫ້ເຫັນວ່າ ກອງທຶນສາມາດສ້າງປະໂຫຍດໃຫ້ບັນດານະຄອນ ແຕ່ຍັງໄດ້ເຂົ້າໃຈກ່ຽວກັບຄວາມຕ້ອງການ ແລະ ໂອກາດ ໃນການປະກອບສ່ວນການພັດທະນານະຄອນອັດສະລິຍະ. ຈາກຄວາມພະຍາຍາມດັ່ງກ່າວ, ມາຮອດປະຈຸບັນພວກເຮົາມີຄວາມຍິນດີທີ່ຈະຕອບສະໜອງບັນດາບຸລິມະສິດອັນດັບຕົ້ນຂອງນະຄອນ ໂດຍສະເພາະດ້ານຄວາມຮູ້ ແລະ ທັກສະທີ່ເຂົາເຈົ້າຢາກເສີມຂະຫຍາຍຄື: ການຄຸ້ມຄອງດ້ານການເງິນຂອງນະຄອນອັດສະລິຍະ.

## ເປັນຫຍັງຈຶ່ງຕ້ອງ ການຄຸ້ມຄອງດ້ານການເງິນຂອງນະຄອນອັດສະລິຍະ?

ນະຄອນ ແລະ ເທດສະບານ ຢູ່ພູມີພາກ ກຳລັງປະເຊີນໜ້າກັບບັນດາຄວາມທ້າທາຍອັນຮີບດ່ວນ ແຕ່ພັດມີຊັບພະຍາກອນທີ່ຈຳກັດ, ໂດຍສະເພາະງົບປະມານຂອງລັດຖະບານທ້ອງຖິ່ນ ເປັນສິ່ງກີດຂວາງການແກ້ໄຂບັນຫາ ທີ່ຈະສາມາດແກ້ໄຂໄດ້. ເມືອງຕ້ອງສາມາດປັບປຸງປະສິດທິ ພາບຂອງການສ້າງລາຍຮັບ ແລະ ມີຫຼາກຫຼາຍແຫຼ່ງທຶນ ເພື່ອໃຫ້ສາມາດປະກອບທຶນໃຫ້ແກ່ການພັດທະນາຕົວເມືອງ.

ໂດຍຜ່ານກອງປະຊຸມວິຊາການນີ້ ກອງທຶນ AASCTF ຈະໄດ້ສະ ເໜີ ແນວຄວາມຄິດໃນການຄຸ້ມຄອງດ້ານການເງິນຂອງນະຄອນອັດສະລິຍະ (SCFM) ແລະ ຄວາມສຳຄັນຂອງມັນ ແລະ ຈະເນັ້ນໃສ່ສິ່ງທ້າທາຍ ແລະ ໂອກາດ ຂອງການຄຸ້ມຄອງວຽກງານການເງິນຂອງນະຄອນອັດສະລິຍະ. ຜູ້ເຂົ້າຮ່ວມກອງປະຊຸມ, ໂດຍສະເພາະເຈົ້າຫນ້າທີ່ນະຄອນ ຈະໄດ້ຮຽນຮູ້ວິທີການສ້າງແຜນຄວາມຕ້ອງການທຶນຖານ ແລະ ການປັບປຸງການຄຸ້ມຄອງດ້ານການເງິນຂອງພວກເຂົາ ລວມທັງການສ້າງລາຍຮັບທີ່ເຂັ້ມແຂງ. ຜູ້ເຂົ້າຮ່ວມຈະໄດ້ກຳໜົດ, ປະເມີນ ແລະ ໃຊ້ປະໂຫຍດຈາກກາລະໂອກາດ, ຄວາມສ່ຽງ ແລະ ການປ່ຽນແປງທີ່ຈຳເປັນ ເພື່ອການລົງທຶນ ແລະ ພັດທະນາຢ່າງມີປະສິດທິພາບ ໂດຍນຳໃຊ້ວິທີການແກ້ໄຂທີ່ທັນສະໄໝ. ຈະມີການຈັດວາງອົງປະກອບຂອງຫຼັກສູດ ເພື່ອຮັບປະກັນການນຳໃຊ້ບົດຮຽນ ເພື່ອໃຫ້ຜູ້ເຂົ້າຮ່ວມສາມາດກະກຽມຍຸດທະວິທີປະຕິບັດຕົວຈິງ ຫຼື ກໍລະນີສຶກສາທາງທຸລະກິດໃນການຄຸ້ມຄອງດ້ານການເງິນຂອງນະຄອນອັດສະລິຍະ ຢູ່ນະຄອນຂອງພວກເຂົາ ລວມມີການລະບຸຊ່ອງຫວ່າງທີ່ຕ້ອງແກ້ໄຂເພື່ອຈັດຕັ້ງປະຕິບັດການຄຸ້ມຄອງດ້ານການເງິນຂອງນະຄອນອັດສະລິຍະທີ່ມີປະສິດຕິຜົນ.

| 1 ກໍລະກົດ 2022 | 5 ກໍລະກົດ 2022 | ຕົ້ນເດືອນສິງຫາ 2022 | 14 ກັນຍາ 2022 | 15 ກັນຍາ – 4 ຕຸລາ 2022 | 5 ຕຸລາ 2022 |
|---|---|---|---|---|---|
| ເປີດຮັບລົງສະມັກ | ມື້ສຸດທ້າຍສຳລັບການລົງທະບຽນ | ສຳເລັດການເປີດຮັບຟອມສະມັກ ແລະ ຕອບຮັບ | ກອງປະຊຸມວິຊາການຄັ້ງທີ 1 | ຮັບບົດຝຶກຫັດໄປຄົ້ນຄວ້າ | ກອງປະຊຸມວິຊາການຄັ້ງທີ 2 |

## ເປົ້າໝາຍຜູ້ເຂົ້າຮ່ວມ

ກອງປະຊຸມໄດ້ຖືກອອກແບບ ສຳລັບພະນັກງານທີ່ເຮັດວຽກກ່ຽວກັບການຄຸ້ມຄອງການເງິນ, ຜູ້ຕັດສິນໃຈດ້ານການເງິນ ແລະ ພະນັກງານພາກລັດທີ່ກ່ຽວຂ້ອງຢູ່ກົມການເງິນ ຫຼື ກະຊວງການເງິນ.

## ພາສາ

ຫຼັກສູດດັ່ງກ່າວຈະໃຊ້ພາສາອັງກິດ ໂດຍມີການແປຄຽງຄູ່ ເປັນພາສາ ບາຮາຊາອິນໂດເນເຊຍ, ຂະແມຣ, ລາວ ແລະ ຫວຽດນາມ ຫຼື ອີງຕາມຄວາມຕ້ອງການພື້ນຖານ.

## ກຳໜົດໝາຍ ແລະ ໄລຍະເວລາ

ຫຼັກສູດດັ່ງກ່າວຈະປະກອບກອງປະຊຸມອອນໄລນ໌ 2 ວາລະ ແຕ່ລະວາລະຈະດຳເນີນເປັນເວລາເຄິ່ງມື້ (ວັນທີ 14ສິງຫາ ແລະ ວັນທີ 5 ຕຸລາ) ແລະ ຈາກນັ້ນຜູ້ເຂົ້າຮ່ວມຈະຮັບບົດຝຶກຫັດໄປຄົ້ນຄວ້າ. ຜູ້ເຂົ້າຮ່ວມຈະໃຊ້ເວລາຕໍ່າສຸດ 15 ຊົ່ວໂມງໃນລະຫວ່າງທັງສອງວາລະ.

## ການສະມັກ

ການເຂົ້າຮ່ວມຫຼັກສູດແມ່ນບໍ່ເສຍຄ່າ, ແຕ່ມີຈຳນວນບ່ອນນັ່ງຈຳກັດເທົ່ານັ້ນ. ກຳນົດເວລາສຳລັບການສະຫມັກແມ່ນ 5 ກໍລະກົດ.